ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# (ຮ່າງ) ກົດລະບຽບ
# ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

DRAFT

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

ນະຄອນຫຼວງ ວຽງຈັນ

ວັນທີ 9 ກໍລະກົດ 2020

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****************

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເລກທີ-----------/ ສຄອຊ

ນະຄອນຫຼວງວຽງຈັນ, ວັນທີ:------------------------

# (ຮ່າງ)ກົດລະບຽບ
# ຂອງສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

- ອີງຕາມ ມະຕິຕົກລົງ ຂອງ ສະພາລັດຖະມົນຕີສະບັບເລກທີ: 0598 / ຫສນຍ, ລົງວັນທີ 05 ພຶດສະພາ 1989, ວ່າດ້ວຍການສ້າງຕັ້ງສະພາການຄ້າແລະອຸດສາຫະກຳແຫ່ງຊາດລາວ.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ 237 / ນຍ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.ລົງວັນທີ 18 ພຶດສະພາ 2020

## ໝວດທີ I

## ຈຸດປະສົງ, ທີ່ຕັ້ງ ແລະ ພາລະບົດບາດ

### ມາດຕາ 1. ຈຸດປະສົງ

ກົດລະບຽບສະບັບນີ້ໄດ້ຮັບການປັບປຸງຂຶ້ນໃໝ່ເພື່ອໃຫ້ສອດຄ່ອງກັບດຳລັດໃໝ່ 237/ນຍ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ. ຈຸດປະສົງກໍເພື່ອນຳໃຊ້ເຂົ້າໃນການບໍລິຫານວຽກງານຕ່າງໆ, ເຊັ່ນ: ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະພາການຄ້າ ແລະອຸດສາຫະກຳ ແຫ່ງຊາດລາວ ແນໃສ່ເສີມຂະຫຍາຍສິດປະຊາທິປະໄຕປະຊາຊົນ ແລະ ຄວາມເປັນເຈົ້າຂອງການຈັດຕັ້ງ, ການເຕົ້າໂຮມຄວາມສາມັກຄີ, ການຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ການຊຸກຍູ້ສົ່ງເສີມບັນດາຫົວໜ່ວຍທຸລະ

DRAFT

ກິດໃຫ້ດຳເນີນທຸລະກິດມີປະສິດທິຜົນສູງ ແລະ ຖືກຕ້ອງຕາມກົດໝາຍ, ປົກປ້ອງສິດ ແລະ ຜົນປະໂຫຍດທີ່ຊອບທຳຂອງບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແມ່ນອົງການຈັດຕັ້ງທາງສັງຄົມຂອງພາກທຸລະກິດ ທີ່ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນໂດຍລັດຖະບານ, ມີຄວາມເປັນເຈົ້າຕົນເອງທາງດ້ານການເຄື່ອນໄຫວ ແລະ ງົບປະມານ, ມີການຮ່ວມມື ແລະ ປະສານສົມທົບກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງ, ເປັນຂົວຕໍ່ລະຫວ່າງພາກລັດ ແລະ ພາກທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ສະມາຄົມ-ກຸ່ມທຸລະກິດ, ສະຫະກອນ, ກຸ່ມຜູ້ປະກອບການທຸລະກິດອິດສະລະ ແລະ ຫົວໜ່ວຍທຸລະກິດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ມີພາລະບົດບາດໃນການປະກອບຄຳຄິດເຫັນໃຫ້ແກ່ພາກລັດກ່ຽວກັບທຸລະກິດ, ປຸກລະດົມຂົນຂວາຍ, ສຶກສາອົບຮົມ, ນຳພາ, ຈັດຕັ້ງ, ເຕົ້າໂຮມນັກທຸລະກິດ ເພື່ອສົ່ງເສີມເສດຖະກິດ, ການຄ້າ, ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການເງິນ ແລະ ການບໍລິການ ລວມທັງປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງວິສາຫະກິດໃຫ້ເຄື່ອນໄຫວທຸລະກິດຖືກຕ້ອງຕາມກົດໝາຍ.

**ມາດຕາ 3. ຊື່ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ**

**ຊື່ເຕັມ**: ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ

**ຊື່ພາສາອັງກິດ**: Lao National Chamber of Commerce and Industry

**ຊື່ຂຽນຫຍໍ້**: ສຄອຊ,

**ຊື່ຂຽນຫຍໍ້ເປັນພາສາອັງກິດ**: LNCCI

**ມາດຕາ 4. ຊື່ ຂອງສະພາການຄ້າ ແລະອຸດສາຫະກຳແຂວງ, ນະຄອນຫຼວງ,ນະຄອນ ແລະ ເມືອງ**

**ຊື່ເຕັມ:** ສະພາການຄ້າ ແລະ ອຸດສາຫະກຳ ປະຈຳແຂວງໃດແມ່ນອອກຊື່ ສະພາການຄ້າ ແລະ ອຸດສາຫະກຳແຂວງນັ້ນ, ສະພາການຄ້າ ແລະ ອຸດສາຫະກຳ ນະຄອນຫຼວງ, ນະຄອນ ແລະ ເມືອງ ກໍ່ເຊັ່ນດຽວກັນ.

**ຊື່ພາສາອັງກິດ**: ແມ່ນໃສ່ຕາມຊື່ແຂວງ ແລະ ນະຄອນຫຼວງ,ນະຄອນ,ເມືອງ ລົງເບື້ອງໜ້າຂອງພາສາອັງກິດນັ້ນ.

**ຕົວຢ່າງ:** Vientiane Capital Chamber of Commerce and Industry, Champasak Chamber of Commerce and Industry, Kaisone City Chamber of Commerce and Industry ຫຼື Xaysetha District Chamber of Commerce and Industry

ຊື່ຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ປະຈຳຕ່າງປະເທດ,ມີຊື່ວ່າ: ຫ້ອງການ ສຄອຊ ປະຈຳປະເທດນັ້ນໆ,

**ມາດຕາ 5. ທີ່ຕັ້ງຂອງ ສຳນັກງານ ສຄອຊ**

ສຳນັກງານຂອງ ສຄອຊ ຕັ້ງຢູ່: ຖະໜົນ ໄກສອນ ພົມວິຫານ, ບ້ານ: ໂພນພະເນົາ, ເມືອງ: ໄຊເຊດຖາ, ນະຄອນຫຼວງ ວຽງຈັນ, ສປປ ລາວ, ຕູ້ ປ.ນ: 4596,

ເບີໂທ: (856-21) 453 312, ແຟັກ: (856 -21) 452 580.

ອີເມວ: info@lncci.la; ເວບໄຊ: www.lncci.la

## ໝວດທີ II

## ໜ້າທີ່ ແລະ ຂອບເຂດສິດ ຂອງ ສະພາການຄ້າ ແລະອຸດສາຫະກຳ ແຫ່ງຊາດລາວ

**ມາດຕາ 6. ໜ້າທີ່**

ສຄອຊ ມີຫນ້າທີ່ຕົ້ນຕໍ ດັ່ງນີ້:

1. ເຄື່ອນໄຫວຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ກົດລະບຽບຂອງ ສຄອຊ;
2. ປຸກລະດົມ, ຂົນຂວາຍ, ຈັດຕັ້ງເຕົ້າໂຮມ ບັນດາຫົວໜ່ວຍທຸລະກິດ ເພື່ອຊ່ວຍເຫຼືອຊຶ່ງກັນ ແລະ ກັນ;
3. ຊຸກຍູ້ສົ່ງເສີມບັນດາຫົວໜ່ວຍທຸລະກິດ ທີ່ເປັນສະມາຊິກຂອງຕົນ ໃຫ້ເຄື່ອນໄຫວຢ່າງມີປະສິດທິຜົນສູງ ແລະ ຖືກຕ້ອງຕາມລະບຽບກົດໝາຍ;
4. ໃຫ້ການຊ່ວຍເຫຼືອ ເພື່ອອຳນວຍຄວາມສະດວກແກ່ການສ້າງຕັ້ງວິສາຫະກິດໃໝ່ ໂດຍການສະໜອງຂໍ້ມູນ, ໃຫ້ຄຳແນະນຳ, ປະສານງານກັບພາກລັດທີ່ກ່ຽວຂ້ອງ ແລະ ອື່ນໆ;
5. ປະກອບສ່ວນໃນການຄົ້ນຄວ້າ ແລະປະກອບຄຳຄິດເຫັນຕໍ່ການສ້າງ ຫຼື ປັບປຸງນະໂຍບາຍ, ການສ້າງກົດໝາຍ ແລະລະບຽບຕ່າງໆ ທີ່ຕິດພັນກັບພາກທຸລະກິດ ເພື່ອສ້າງສະພາບແວດລ້ອມທີ່ດີແກ່ການດຳເນີນທຸລະກິດ;
6. ສົມທົບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຄົ້ນຄວ້ານຳສະເໜີການປົກຄອງທ້ອງຖິ່ນ ພິຈາລະນາສ້າງຕັ້ງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ;

DRAFT

7. ຊຸກຍູ້ສົ່ງເສີມ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ທີ່ໄດ້ສ້າງຕັ້ງແລ້ວ ໃຫ້ໄດ້ຮັບການພັດທະນາດີຂຶ້ນ;
8. ພິຈາລະນາຮັບເອົາສະມາຊິກໃໝ່ ຫຼື ປົດສະມາຊິກອອກຈາກ ສຄອຊ, ກໍ່ສ້າງ ແລະ ບຳລຸງຍົກລະດັບຄວາມຮູ້, ປະສົບການ ກ່ຽວກັບການດຳເນີນທຸລະກິດ ໃຫ້ແກ່ສະມາຊິກດ້ວຍຮູບການຕ່າງໆທີ່ເໝາະສົມຢູ່ພາຍໃນ ແລະ ຕ່າງປະເທດ;
9. ຊີ້ນຳ-ນຳພາ ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ໃນການປະຕິບັດກົດລະບຽບຂອງ ສຄອຊ ໃຫ້ເປັນເອກະພາບ ແລະ ມີປະສິດທິຜົນ;
10. ປຸກລະດົມ ແລະ ສົ່ງເສີມການສ້າງສາຍພົວພັນແຮງງານທີ່ດີລະຫວ່າງຜູ້ໃຊ້ແຮງງານກັບຜູ້ອອກແຮງງານໃນທຸກຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງ ສຄອຊ;
11. ເຂົ້າຮ່ວມການເຈລະຈາ, ຕໍ່ລອງກ່ຽວກັບການຄ້າ, ການລົງທຶນ, ບັນຫາການໃຊ້ແຮງງານ, ເງິນເດືອນ ແລະ ອື່ນໆ ທີ່ຈັດຂຶ້ນຢູ່ພາຍໃນ ຫຼື ຕ່າງປະເທດ ເພື່ອປົກປ້ອງສິດຜົນປະໂຫຍດທີ່ຊອບທຳຂອງຫົວໜ່ວຍທຸລະກິດທີ່ເປັນສະມາຊິກຂອງ ສຄອຊ;
12. ເປັນກອງເລຂາພາກທຸລະກິດໃຫ້ແກ່ກອງປະຊຸມນັກທຸລະກິດລາວ ໂດຍປະສານສົມທົບກັບ ກະຊວງ, ຂະແໜງການ ທີ່ເປັນຈຸດປະສານງານຂອງພາກລັດໃນການຈັດກອງປະຊຸມດັ່ງກ່າວ;
13. ເກັບກຳ, ສະຫຼຸບສັງລວມ ສະພາບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ທີ່ເປັນສະມາຊິກ ເພື່ອລາຍງານຕໍ່ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງ, ອົງການອື່ນໆທີ່ກ່ຽວຂ້ອງຢ່າງເປັນປົກກະຕິ;
14. ເກັບກຳ, ສັງລວມ, ວິໄຈ ແລະ ສະໜອງຂໍ້ມູນຂ່າວສານດ້ານການຕະຫຼາດ, ລາຄາສິນຄ້າ ໃຫ້ແກ່ສະມາຊິກ ແລະ ທົ່ວສັງຄົມ;
15. ເກັບກຳຂໍ້ມູນຂອງວິສາຫະກິດຢູ່ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ພ້ອມທັງສົ່ງເສີມການສ້າງ ແລະ ພັດທະນາສູນຂໍ້ມູນວິສາຫະກິດ ແລະ ທຸລະກິດ;
16. ເປັນເຈົ້າການຈັດຕັ້ງ ແລະ ລະດົມສະມາຊິກຂອງຕົນ ເຂົ້າຮ່ວມງານວາງສະແດງສິນຄ້າຕ່າງໆ ແລະ ງານພົບປະນັກທຸລະກິດ ທີ່ຈັດຂຶ້ນຢູ່ພາຍໃນ ແລະ ຕ່າງປະເທດ;
17. ປະຕິບັດໜ້າທີ່ອື່ນໆທີ່ກຳນົດໄວ້ໃນກົດໝາຍ ແລະ ກົດລະບຽບຂອງ ສຄອຊ.

**ມາດຕາ 7. ຂອບເຂດສິດ**

ສຄອຊ ມີຂອບເຂດສິດ ດັ່ງນີ້:

1. ຄົ້ນຄວ້າຕໍ່ການສະເໜີສ້າງຕັ້ງສະມາຄົມທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ສະເໜີສ້າງຕັ້ງຂຶ້ນຢູ່ ສປປ ລາວ ເພື່ອນຳສະເໜີ ກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາສ້າງຕັ້ງ;
2. ຕາງໜ້າພາກທຸລະກິດເຂົ້າຮ່ວມໃນການຄົ້ນຄວ້າ, ສະເໜີຄຳຄິດເຫັນຕໍ່ການສ້າງ ຫຼື ປັບປຸງນະໂຍບາຍ, ການສ້າງ ແລະ ປັບປຸງກົດໝາຍ ທີ່ຕິດພັນກັບຂົງເຂດທຸລະກິດ;
3. ພິຈາລະນາການອະນຸມັດ ການຈັດ, ການເຂົ້າຮ່ວມ ງານຕະຫຼາດນັດ ແລະ ງານວາງສະແດງສິນຄ້າ ທີ່ຈັດຢູ່ພາຍໃນ ແລະ ຕ່າງປະເທດ ທີ່ບໍ່ໃຊ້ງົບປະມານຂອງລັດຖະບານ ພາຍໃຕ້ການຊີ້ນຳຂອງ ກະຊວງອຸດສາຫະກຳ ແລະ ການຄ້າ;
4. ນຳໃຊ້ມາດຕະການຕ່າງໆ ເພື່ອປົກປ້ອງສິດຜົນປະໂຫຍດອັນຖືກຕ້ອງ ແລະ ຊອບທຳ ຂອງບັນດາສະມາຊິກບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ເຂົ້າຮ່ວມການປຶກສາຫາລືກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງຂອງລັດໃນການກຳນົດຄ່າແຮງງານຕໍ່າສຸດ, ການສ້າງ ຫຼື ປັບປຸງກົດໝາຍ ແລະ ລະບຽບການ ທີ່ຕິດພັນກັບ ການນຳໃຊ້ແຮງງານ, ການປະກັນສັງຄົມ, ພ້ອມທັງເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານແຮງງານ ແລະ ດ້ານເສດຖະກິດລະຫວ່າງສະມາຊິກ ຫຼືລະຫວ່າງສະມາຊິກກັບ ບຸກຄົນ ແລະ ນິຕິບຸກຄົນອື່ນ;
6. ເປັນຕົວແທນພາກທຸລະກິດເຂົ້າຮ່ວມການເຈລະຈາ ເພື່ອຮ່ວມມືດ້ານການຄ້າ ເປັນຕົ້ນ ການຊື້-ຂາຍສິນຄ້າ , ການລົງທຶນຮ່ວມດ້ານການຜະລິດ, ການຄ້າ ແລະ ການບໍລິການ;
7. ພົວພັນກັບອົງການປົກຄອງແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ເພື່ອຂໍອະນຸມັດສ້າງຕັ້ງສຳນັກງານຜູ້ຕາງໜ້າ ສະພາການຄ້າ ແລະ ອຸດສາຫະກຳ ປະຈຳ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ພ້ອມທັງແຕ່ງຕັ້ງຕົວແທນຂອງຕົນໄປປະຈຳຢູ່ຕ່າງປະເທດ ເພື່ອສ້າງສາຍພົວພັນທາງດ້ານເສດຖະກິດ-ການຄ້າ ຕາມການມອບໝາຍຂອງລັດຖະບານ;
8. ຄຸ້ມຄອງ ແລະ ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ຜະລິດຢູ່ໃນ ສປປ ລາວ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ;
9. ຕິດຕາມຄະນະຜູ້ແທນລະດັບສູງຂອງລັດຖະບານໄປເຄື່ອນໄຫວຢ້ຽມຢາມ ຫຼື ເຮັດວຽກຢູ່ຕ່າງປະເທດ ໃນນາມຕົວແທນຂອງພາກທຸລະກິດ;
10. ຮັບເອົາການຊ່ວຍເຫຼືອລ້າ ຫຼື ການສະໜັບສະໜູນຈາກລັດຖະບານ, ຈາກບຸກຄົນ, ນິຕິບຸກຄົນທັງພາຍໃນ, ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
11. ສ້າງຕັ້ງ ແລະ ພັດທະນາສູນບໍລິການດ້ານຂໍ້ມູນແກ່ ວິສາຫະກິດຂະໜາດນ້ອຍ ແລະ ກາງ ພ້ອມດ້ວຍສູນສົ່ງເສີມການຕະຫຼາດ ແລະ ຜະລິດຕະພັນທີ່ຜະລິດຢູ່ ສປປ ລາວ ລວມທັງການຝຶກອົບຮົມແບບມີສ່ວນຮ່ວມ ລະຫວ່າງ ພາກລັດ ແລະ ພາກທຸລະກິດ ຕາມການຕົກລົງເຫັນດີຂອງລັດຖະບານ;

12. ຕິດຕາມກວດກາ, ປະເມີນຜົນຂອງພາກທຸລະກິດໃນການດຳເນີນທຸລະກິດ, ຢັ້ງຢືນສະຖານະພາບຂອງທຸລະກິດກ່ອນເຂົ້າຮ່ວມປະມູນໂຄງການທີ່ຕິດພັນກັບການນຳໃຊ້ງົບປະມານຂອງພາກລັດ ຕາມການຮຽກຮ້ອງຂອງລັດຖະບານ;
13. ສະເໜີ ຫຼື ຮຽກຮ້ອງ ໃຫ້ພາກສ່ວນກ່ຽວຂ້ອງທົບທວນຄືນ ກ່ຽວກັບ ການປະມູນທີ່ບໍ່ໂປ່ງໃສ, ການແຂ່ງຂັນທຸລະກິດທີ່ບໍ່ເປັນທຳ ເພື່ອປົກປ້ອງຜົນປະໂຫຍດອັນຊອບທຳຂອງຫົວໜ່ວຍທຸລະກິດ;
14. ໃຫ້ການຍ້ອງຍໍ ແລະ ສະເໜີໃຫ້ ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ ໃຫ້ການຍ້ອງຍໍທຸລະກິດທີ່ມີຜົນງານດີເດັ່ນ;
15. ປະຕິບັດສິດອື່ນ ຕາມກົດລະບຽບຂອງ ສຄອຊ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດ III

## ໂຄງປະກອບການຈັດຕັ້ງຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ

### ມາດຕາ 8. ໂຄງປະກອບການຈັດຕັ້ງ

ໂຄງປະກອບການຈັດຕັ້ງຂອງ ສຄອຊ ປະກອບດ້ວຍຄະນະບໍລິຫານງານ, ຄະນະປະຈຳ, ປະທານ ແລະຮອງປະທານ, ປະທານກິດຕິມະສັກ, ຄະນະທີ່ປຶກສາ, ຄະນະກຳມາທິການ, ຄະນະກວດກາ, ຄະນະເລຂາທິການ, ຫ້ອງການບໍລິຫານ, ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ແລະ ສຳນັກງານຜູ້ຕາງໜ້າຢູ່ຕ່າງປະເທດ.

ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ,ເມືອງ, ນະຄອນ ມອບໃຫ້ປະທານ ສຄອຊ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ..

### ມາດຕາ 9. ຄະນະບໍລິຫານງານ

ຄະນະບໍລິຫານງານຂອງ ສຄອຊ ຖືກເລືອກຕັ້ງໂດຍກອງປະຊຸມໃຫຍ່ຂອງ ສຄອຊ ໂດຍມີພາລະບົດບາດຊີ້ນຳ-ນຳພາທຸກການເຄື່ອນໄຫວ ແລະ ຕົກລົງບັນຫາສຳຄັນຂອງ ສຄອຊ ລະຫວ່າງກາງສອງສະໄໝກອງປະຊຸມໃຫຍ່.

### ມາດຕາ 10. ໜ້າທີ່ ແລະ ຂອບເຂດສິດຂອງຄະນະບໍລິຫານງານ

ໜ້າທີ່ ແລະ ຂອບເຂດສິດຂອງຄະນະບໍລິຫານງານ ປະກອບມີ:

1. ວາງມາດຕະການທີ່ຈຳເປັນ ເພື່ອຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ມະຕິຂອງຄະນະບໍລິຫານງານ ສຄອຊ ແລະ ມະຕິຄຳສັ່ງ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຖະບານ ທີ່ຕິດພັນກັບ ສຄອຊ;
2. ພິຈາລະນາຕົກລົງກ່ຽວກັບແຜນການເຄື່ອນໄຫວ, ແຜນງົບປະມານປະຈຳປີຂອງ ສຄອຊ;



DRAFT

3. ຕົກລົງກ່ຽວກັບອັດຕາຄ່າທຳນຽມການເຂົ້າຮ່ວມເປັນສະມາຊິກ, ເງິນບຳລຸງ ແລະ ລາຍຮັບ-ລາຍຈ່າຍຂອງ ສຄອຊ;
4. ພິຈາລະນາກ່ຽວກັບໂຄງປະກອບການຈັດຕັ້ງ, ການແຕ່ງຕັ້ງຫົວໜ້າ ແລະ ຮອງຫົວໜ້າຫົວໜ່ວຍງານ ແລະ ການຈັດຕັ້ງວິຊາການຕ່າງໆທີ່ຂຶ້ນກັບ ສຄອຊ;
5. ເລືອກຕັ້ງຄະນະປະຈຳ, ປະທານ, ຮອງປະທານ, ຄະນະກວດກາ ແລະ ເລຂາທິການຂອງ ສຄອຊ; ອຳນວຍ ຄວບຄຸມການເຄື່ອນໄຫວຂອງຄະນະປະຈຳ ແລະ ການຈັດຕັ້ງອື່ນໆທີ່ຂຶ້ນກັບ;
6. ປະຕິບັດສິດອື່ນໆທີ່ກຳນົດໄວ້ໃນກົດລະບຽບຂອງ ສຄອຊ ແລະ ກົດໝາຍຂອງສປປ ລາວ.

ຄະນະບໍລິຫານງານ ສຄອ ແຫ່ງຊາດລາວປະກອບດ້ວຍ 45 ? ທ່ານ ທີ່ມາຈາກ:

ມາຈາກການເລືອກຕັ້ງຢູ່ສູນກາງ 27 ທ່ານ, ມາຈາກຕົວແທນຄະນະບໍລິຫານ ສຄອ ແຂວງ ແລະ ນະຄອນຫຼວງ ເຊິ່ງຖືກແຕ່ງຕັ້ງເຂົ້າໂດຍກົງ 18 ທ່ານ, ສຳລັບ 27 ທ່ານນັ້ນຕ້ອງເປັນຕົວແທນມາຈາກທຸກຂະແໜງທຸລະກິດ ທີ່ເປັນທ່າແຮງໃນການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ.

**ມາດຕາ 11. ອາຍຸການ ຂອງຄະນະບໍລິຫານງານ**

ຄະນະບໍລິຫານງານ ສຄອຊ ມີອາຍຸການສະໄໝລະ ສາມ ປີ.

**ມາດຕາ 12. ຄະນະປະຈຳ**

ຄະນະປະຈຳ ສຄອຊ ແມ່ນ ຄະນະທີ່ປະກອບດ້ວຍ ປະທານ, ບັນດາຮອງປະທານ, ປະທານກວດກາ, ນາຍຄັງ ທີ່ຖືກຮັບຮອງໂດຍກອງປະຊຸມຄະນະບໍລິຫານງານ ສຄອຊ ເພື່ອເປັນຜູ້ຊີ້ນຳ-ນຳພາວຽກງານທັງໝົດຂອງ ຫ້ອງການ ສຄອຊ ແລະ ທຸກໆວຽກງານການເຄື່ອນໄຫວຂອງ ສຄອຊ ຕາມຂອບເຂດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດສະບັບນີ້.

**ມາດຕາ 13. ໜ້າທີ່ ແລະ ຂອບເຂດສິດຂອງຄະນະປະຈຳ**

ໜ້າທີ່ ແລະ ຂອບເຂດສິດຂອງຄະນະປະຈຳ ປະກອບມີ:

1. ຄົ້ນຄວ້າແຜນຍຸດທະສາດການພັດທະນາຂອງ ສຄອຊ, ແຜນການເຄື່ອນໄຫວ, ແຜນງົບປະມານ ເພື່ອສະເໜີກອງປະຊຸມຄະນະບໍລິຫານງານ, ກອງປະຊຸມປະຈຳປີ ແລະ ກອງປະຊຸມໃຫຍ່ ພິຈາລະນາຮັບຮອງ;
2. ຊີ້ນຳໃນການຄົ້ນຄວ້າ ແລະ ການກຳນົດການບໍລິການຝຶກອົບຮົມທາງດ້ານຄວາມຮູ້, ຄວາມສາມາດທີ່ເໝາະສົມ ແລະ ທ່ວງທັນກັບການແຂ່ງຂັນທາງດ້ານທຸລະກິດການຕະຫຼາດໃຫ້ແກ່ທຸກພາກສ່ວນທຸລະກິດລາວ , ຜູ້ປະກອບການລາວ ໃນລະດັບປະເທດ, ແຂວງ, ນະຄອນຫຼວງ, ເມືອງ ແລະ ນະຄອນ;
3. ຊີ້ນຳ, ກວດກາ, ຄຸ້ມຄອງການຈັດຕັ້ງປະຕິບັດແຜນການ ແລະ ທຸກການເຄື່ອນໄຫວວຽກງານຂອງ ສຄອຊ ລວມທັງວຽກງານການພົວພັນພາຍໃນ ແລະ ຕ່າງປະເທດໃນນາມຂອງ ສຄອຊ;

4. ປະສານສົມທົບ ແລະ ປຶກສາຫາລືກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ໃນວຽກງານທີ່ຕິດພັນກັບພາກທຸລະກິດ, ການນຳໃຊ້ແຮງງານ ແລະ ພົວພັນເຖິງການປັບປຸງການຈັດຕັ້ງຂອງ ສຄອຊ;
5. ຈັດຕັ້ງການພົບປະກັບນັກທຸລະກິດລະດັບຊາດ, ລະດັບສາກົນ ເພື່ອໂຄສະນາເຜີຍແຜ່ວຽກງານວາງສະແດງທາງດ້ານທຸລະກິດຢ່າງມີປະສິດທິຜົນ, ທັງຮັບປະກັນໃຫ້ພະນັກງານຂອງ ສຄອຊ ສາມາດກຳແໜ້ນ ແລະ ຊາບຊຶ້ງຕໍ່ທິດທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ທີ່ແນ່ໃສ່ສົ່ງເສີມພາກທຸລະກິດເຂົ້າສູ່ລະບຽບກົດໝາຍ ແລະ ເປີດກວ້າງສູ່ການແຂ່ງຂັນກັນຢ່າງຊອບທຳໃນຂອບເຂດທົ່ວປະເທດ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ;
6. ພົວພັນຮ່ວມມືກັບຕ່າງປະເທດໃນວຽກງານຕ່າງໆທີ່ກ່ຽວຂ້ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສຄອຊ;
7. ພິຈາລະນາຮັບຮອງ ຫຼື ຢຸດຕິການເປັນສະມາຊິກຂອງ ສຄອຊ;
8. ຈັດຕັ້ງກອງປະຊຸມປະຈຳເດືອນ ເພື່ອພິຈາລະນາບັນຫາຕ່າງໆຂອງ ສຄອຊ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດລະບຽບຂອງ ສຄອຊ ແລະ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 14. ປະທານ ຂອງ ສຄອຊ**

ສຄອຊ ປະກອບມີ ປະທານ ໜຶ່ງ ທ່ານ ແລະ ຮອງປະທານ ຈຳນວນໜຶ່ງ ຊຶ່ງໄດ້ຮັບການເລືອກຕັ້ງໂດຍກອງປະຊຸມໃຫຍ່ ສຄອຊ.

ປະທານ ສຄອຊ ເປັນຜູ້ຕາງໜ້າຄະນະບໍລິຫານງານໃນການຊີ້ນຳ-ນຳພາການເຄື່ອນໄຫວວຽກງານຂອງ ສຄອຊ ໃນທຸກຂົງເຂດວຽກ ຕາມຂອບເຂດສິດ ແລະ ໜ້າທີ່ ທີ່ກຳນົດໃນດຳລັດສະບັບນີ້.

**ມາດຕາ 15. ສິດ ແລະ ໜ້າທີ່ຂອງປະທານ**

ປະທານ ສຄອຊ ມີສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:

1. ເປັນປະທານກອງປະຊຸມໃຫຍ່ ແລະ ກອງປະຊຸມສະໄໝສາມັນຂອງ ສຄອຊ;
2. ຊີ້ນຳການເຄື່ອນໄຫວວຽກງານ, ພົວພັນປະສານງານກັບ ພາຍໃນ ແລະ ຕ່າງປະເທດ ຕາມຂອບເຂດສິດຂອງ ສຄອຊ;
3. ຕາງໜ້າໃຫ້ ສຄອຊ ໃນການປະສານສົມທົບ ແລະ ປຶກສາຫາລືກັບ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງສາກົນ ແລະ ອື່ນໆ ຕາມພາລະບົດບາດ, ຂອບເຂດສິດຂອງ ສຄອຊ;
4. ພິຈາລະນາຮັບເອົາສະມາຊິກໃໝ່ ຫຼື ປົດສະມາຊິກອອກຈາກ ສຄອຊ ຕາມການສະເໜີຂອງເລຂາທິການ;
5. ສະເໜີແຕ່ງຕັ້ງຮອງປະທານ, ຄະນະທີ່ປຶກສາ, ປະທານກົດຕິມະສັກ, ຄະນະກວດກາ ເພື່ອໃຫ້ກອງປະຊຸມໃຫຍ່ຮັບຮອງ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດລະບຽບຂອງ ສຄອຊ ແລະ ກົດໝາຍຂອງລັດ.

**ມາດຕາ 16. ຮອງປະທານ**

ຮອງປະທານ ມີພາລະບົດບາດເປັນຜູ້ຊ່ວຍວຽກປະທານ ໃນການປະຕິບັດໜ້າທີ່ວຽກງານຕ່າງໆ ຕາມການມອບໝາຍຂອງປະທານ ແລະ ເຮັດໜ້າທີ່ແທນປະທານໃນເວລາປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້.

**ມາດຕາ 17. ຄະນະກວດກາ**

ຄະນະກວດກາໄດ້ຮັບການເລືອກຕັ້ງໂດຍຄະນະບໍລິຫານງານ ສຄອຊ ມີພາລະບົດບາດ, ໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້:

1. ດຳເນີນການກວດກາເປັນປົກກະຕິ ແລະ ກວດກາເມື່ອມີປະກົດການລະເມີດກົດລະບຽບ ຫຼື ແບບແຜນການເຄື່ອນໄຫວຂອງ ສຄອຊ;
2. ກວດກາການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່, ກອງປະຊຸມປະຈຳປີ, ມະຕິກອງປະຊຸມຄະນະບໍລິຫານງານ ແລະ ມະຕິກອງປະຊຸມຂອງຄະນະປະຈຳ ສຄອຊ;
3. ກວດກາຄຸ້ມຄອງການໃຊ້ຈ່າຍການເງິນຂອງ ສຄອຊ;
4. ແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ຫຼື ການສະເໜີຕ່າງໆຂອງສະມາຊິກຕາມຂອບເຂດສິດຂອງຕົນ;
5. ປະຕິບັດບົດບາດ, ສິດ ແລະ ໜ້າທີ່ອື່ນ ຕາມກົດລະບຽບຂອງ ສຄອຊ ແລະ ກົດໝາຍຂອງ ສປປ ລາວ.

**ມາດຕາ 18. ນາຍຄັງ**

ນາຍຄັງ 1 ທ່ານທີ່ຜ່ານການເລືອກຕັ້ງຈາກກອງປະຊຸມຂອງຄະນະບໍລິຫານງານສຄອຊ, ນາຍຄັງມີໜ້າທີ່,ສິດ ແລະ ພາລະບົດບາດຫຼັກດັ່ງນີ້:

1. ວາງແຜນການງົບປະມານລາຍຮັບ - ລາຍຈ່າຍປະຈຳປີ, ແຜນງົບປະມານການກໍ່ສ້າງ, ການສ້ອມແປງ, ການຈັດຊື້ອຸປະກອນ ແລະອື່ນໆ ຂອງສຄອຊ ຮ່ວມກັບພະແນກບໍລິຫານ - ການເງິນ ແລະ ສະເໜີຜ່ານກອງປະຊຸມຄະນະປະຈຳ, ຄະນະບໍລິຫານງານ ຂຶ້ນກັບງົບປະມານທີ່ຈະຕ້ອງຈ່າຍ (ຕາມລະບຽບການເງິນ)
2. ຊີ້ນຳວຽກງານການເງິນ ແລະ ປະສານງານກັບຄະນະກວດຊອບບັນຊີເພື່ອລົງກວດກາຕາມລະບຽບການຂອງລັດ, ຊີ້ນຳຫ້ອງການບໍລິຫານຂຶ້ນບັນຊີບັນດາຊັບສິນຕ່າງໆ ຂອງ ສຄອຊ ພາຍໃຕ້ລະບຽບການ ແລະ ລາຍງານຄະນະປະຈຳ ເປັນປະຈຳ,
3. ປັບປຸງ ແລະ ສ້າງນິຕິກຳກ່ຽວກັບການຄຸ້ມຄອງການເງິນ, ບັນຊີ, ຊັບສິນ ແລະ ອື່ນໆທີ່ກ່ຽວຂ້ອງກັບວຽກງານການສ້າງລາຍຮັບຂອງ ສຄອຊ,

**ມາດຕາ 19. ຄະນະເລຂາທິການ**

ຄະນະເລຂາທິການ ແມ່ນ ຜູ້ປະຈຳການທີ່ໄດ້ຮັບການເລືອກຕັ້ງໂດຍ ຄະນະບໍລິຫານງານ ສຄອຊ ແມ່ນບຸກຄົນພາຍນອກທີ່ບໍ່ເປັນເຈົ້າຂອງທຸລະກິດ, ມີພາລະບົດບາດ, ໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້:

**ກ. ເລຂາທິການ**

ມີພາລະບົດບາດ, ໜ້າທີ່ ແລະ ສິດຕົ້ນຕໍ ດັ່ງນີ້:

1. ກະກຽມເອກະສານ, ເນື້ອໃນ ແລະ ເງື່ອນໄຂ ທີ່ຈຳເປັນຕ່າງໆ ໃຫ້ແກ່ກອງປະຊຸມຄະນະບໍລິຫານງານ ແລະ ຄະນະປະຈຳ ສຄອຊ;
2. ສະເໜີຄຳເຫັນ, ຄຳສະເໜີແນະຕໍ່ປະທານ, ຮອງປະທານກ່ຽວກັບບັນຫາຕ່າງໆທີ່ພົວພັນເຖິງ ສຄອຊ;
3. ກະກຽມບົດສະຫຼຸບປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ເພື່ອລາຍງານຕໍ່ຄະນະບໍລິຫານງານ, ຄະນະປະຈຳ ຫຼື ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ;
4. ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃນດ້ານຕ່າງໆທີ່ຈຳເປັນສຳລັບການເຄື່ອນໄຫວວຽກງານຂອງປະທານຮອງປະທານ ແລະ ຫົວໜ່ວຍການຈັດຕັ້ງວິຊາການຕ່າງໆທີ່ຂຶ້ນກັບ ສຄອຊ;
5. ພົວພັນ, ປະສານງານກັບບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກ, ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນຕ່າງໆ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ພົວພັນ, ຮ່ວມມືກັບສາກົນ ແລະ ຕ່າງປະເທດຕໍ່ວຽກງານຕ່າງໆທີ່ກ່ຽວຂ້ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສຄອຊ ແລະ ຕາມການອະນຸມັດຂອງຄະນະປະຈຳ;
6. ປະຕິບັດບົດບາດສິດ ແລະ ໜ້າທີ່ອື່ນ ຕາມກົດລະບຽບຂອງ ສຄອຊ ແລະ ກົດໝາຍຂອງສປປ ລາວ.

ມາດຖານ, ເງື່ອນໄຂ ແລະ ຄຸນສົມບັດຂອງເລຂາທິການແມ່ນໃຫ້ປະຕິບັດຕາມການກຳນົດຢູ່ໃນລະບຽບສະເພາະອີກ.

**ຂ. ຮອງເລຂາທິການ**

ຮອງເລຂາທິການມີພາລະບົດບາດເປັນຜູ້ຊ່ວຍວຽກເລຂາທິການໃນການອຳນວຍຄວາມສະດວກ, ຄວບຄຸມວຽກງານຫ້ອງການປະຈຳຂອງ ສຄອຊ, ປະຕິບັດໜ້າທີ່ຕ່າງໆ ທີ່ເລຂາທິການມອບໝາຍໃຫ້ ແລະ ເຮັດໜ້າທີ່ແທນເລຂາທິການເມື່ອເລຂາທິການບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້.

ມາດຖານ, ເງື່ອນໄຂ ແລະ ຄຸນສົມບັດຂອງຮອງເລຂາທິການແມ່ນໃຫ້ປະຕິບັດຕາມການກຳນົດຢູ່ໃນ ລະບຽບສະເພາະອີກ.

**ມາດຕາ 20. ຫ້ອງການບໍລິຫານ**

ຫ້ອງການບໍລິຫານ ແມ່ນ ຫ້ອງການເລຂາທິການ ຊຶ່ງເປັນກົງຈັກຊ່ວຍວຽກ ແລະ ປະຈຳການຂອງ ສຄອຊ ມີພາລະບົດບາດເປັນເສນາທິການ ແລະ ຊ່ວຍວຽກໃຫ້ແກ່ ຄະນະບໍລິຫານງານ, ຄະນະປະຈຳຂອງ ສຄອຊ ໃນການຄຸ້ມ

DRAFT

ຄອງ, ບໍລິຫານວຽກງານ, ຕິດຕໍ່ພົວພັນປະສານງານພາຍໃນ ແລະ ພາຍນອກ, ອໍານວຍຄວາມສະດວກ, ການປ້ອງກັນຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງ ສຄອຊ.

**ມາດຕາ 21. ສະພາການຄ້າ ແລະ ອຸດສາຫະກໍາ ແຂວງ, ນະຄອນຫຼວງ, ນະຄອນ, ເມືອງ**

ສະພາການຄ້າ ແລະ ອຸດສາຫະກໍາ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ແມ່ນ ອົງການຈັດຕັ້ງທາງສັງຄົມຂອງພາກທຸລະກິດທີ່ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນໂດຍອໍານາດການປົກຄອງທ້ອງຖິ່ນໃນແຕ່ລະຂັ້ນ, ມີຄວາມເປັນເຈົ້າຕົນເອງທາງດ້ານການເຄື່ອນໄຫວ ແລະ ງົບປະມານ, ມີການຮ່ວມມື ແລະ ປະສານສົມທົບກັບອົງການຈັດຕັ້ງລັດທີ່ກ່ຽວຂ້ອງຢູ່ທ້ອງຖິ່ນຂອງຕົນ, ເປັນຂົວຕໍ່ລະຫວ່າງພາກລັດ ແລະ ພາກທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ສະມາຄົມ-ກຸ່ມທຸລະກິດ, ສະຫະກອນ, ກຸ່ມຜູ້ປະກອບການທຸລະກິດອິດສະລະ ແລະ ຫົວໜ່ວຍທຸລະກິດ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາການຄ້າ ແລະ ອຸດສາຫະກໍາ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ແມ່ນປະຕິບັດຄືກັນກັບ ສຄອຊ ແຕ່ເຄື່ອນໄຫວຢູ່ໃນຂອບເຂດສະເພາະແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ເທົ່ານັ້ນ ໂດຍມອບໃຫ້ປະທານ ສຄອຊ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ.

**ມາດຕາ 22. ສໍານັກງານຜູ້ຕາງໜ້າປະຈໍາຢູ່ຕ່າງປະເທດ**

ສໍານັກງານຜູ້ຕາງໜ້າປະຈໍາຢູ່ຕ່າງປະເທດ ແມ່ນ ກົງຈັກການຈັດຕັ້ງຂອງ ສຄອຊ, ມີພາລະບົດບາດເປັນຕົວແທນໃຫ້ແກ່ ສຄອຊ ເຄື່ອນໄຫວກິດຈະກໍາ, ໂຄງການຂອງ ສຄອຊ ທີ່ໄດ້ປະຕິບັດ, ກໍາລັງປະຕິບັດ ຫຼື ຈະປະຕິບັດ ຢູ່ຕ່າງປະເທດ.

ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສໍານັກງານຜູ້ຕາງໜ້າປະຈໍາຢູ່ຕ່າງປະເທດ ແມ່ນມອບໃຫ້ປະທານ ສຄອຊ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ.

## ໝວດທີ IV

## ສະມາຊິກຂອງ ສຄອຊ

**ມາດຕາ 23. ສະມາຊິກຂອງສຄອຊ**

ສະມາຊິກຂອງ ສຄອຊ ມີ ສາມ ປະເພດຄື:

1. ສະມາຊິກສາມັນ;
2. ສະມາຊິກສົມທົບ;
3. ສະມາຊິກກິດຕິມະສັກ.

DRAFT

**ມາດຕາ 24. ສະມາຊິກສາມັນ**

ສະມາຊິກສາມັນຂອງ ສຄອຊ ແມ່ນ ຫົວໜ່ວຍທຸລະກິດທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຫຼື ໄດ້ຮັບໃບອະນຸຍາດລົງທຶນຖືກຕ້ອງຕາມກົດໝາຍຂອງ ສປປ ລາວ.

ສະມາຊິກສາມັນ ແມ່ນ ຫົວໜ່ວຍທຸລະກິດທີ່ມີທຶນຈົດທະບຽນ ແຕ່800.000.000 ກີບ (ແປດຮ້ອຍລ້ານ) ກີບຂຶ້ນໄປ ໃຫ້ເຂົ້າເປັນສະມາຊິກຂອງ ສຄອຊ ໂດຍຖືກຕ້ອງຕາມເງື່ອນໄຂທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ກົດລະບຽບຂອງສຄອຊ, ສ່ວນຫົວໜ່ວຍທຸລະກິດທີ່ມີທຶນຈົດທະບຽນ ຕ່ຳກວ່າ 800.000.000 (ແປດຮ້ອຍລ້ານ) ກີບລົງມາ ໃຫ້ເຂົ້າເປັນສະມາຊິກ ສຄອຊ ດ້ວຍຄວາມສະໝັກໃຈ.

**ມາດຕາ 25. ສະມາຊິກສົມທົບ**

ສະມາຊິກສົມທົບ ແມ່ນ ພົນລະເມືອງລາວ ທີ່ເປັນຕົວແທນຕາງໜ້າໃຫ້ແກ່ຫົວໜ່ວຍທຸລະກິດ, ສະມາຄົມ ຫຼື ກຸ່ມທຸລະກິດ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ, ມີຄວາມເຫັນດີເຫັນພ້ອມນຳກົດລະບຽບຂອງ ສຄອຊ, ມີການປະກອບສ່ວນສົມທົບ, ໃຫ້ການຊ່ວຍເຫຼືອດ້ານແນວຄວາມຄິດ, ງົບປະມານ ຫຼື ອື່ນໆໃຫ້ແກ່ ສຄອຊ.

ສະມາຊິກສົມທົບບໍ່ມີສິດໃນການເລືອກຕັ້ງ, ບໍ່ມີສິດສະໝັກຮັບເລືອກຕັ້ງເຂົ້າໃນຕຳແໜ່ງຄະນະບໍລິຫານງານ, ຄະນະປະຈຳ, ຄະນະກວດກາ, ນາຍຄັງ, ເລຂາທິການ ແລະ ບໍ່ມີສິດລົງຄະແນນສຽງຕົກລົງບັນຫາຕ່າງໆທີ່ສຳຄັນຂອງ ສຄອຊ.

**ມາດຕາ 26. ສະມາຊິກກິດຕິມະສັກ**

ສະມາຊິກກິດຕິມະສັກ ແມ່ນ ບຸກຄົນ ຫຼື ນິຕິບຸກຄົນ ໂດຍບໍ່ຈຳແນກສັນຊາດ ຊຶ່ງເປັນຜູ້ມີຄຸນສົມບັດ ແລະ ຄວາມສາມາດ, ມີປະສົບການ ແລະ ຄວາມຊຳນິຊຳນານ ໃນການຄຸ້ມຄອງບໍລິຫານທຸລະກິດ ແລະ ມີຄວາມເຫັນດີ ເຫັນພ້ອມນຳກົດລະບຽບຂອງ ສຄອຊ ໂດຍເຫັນດີໃຫ້ການສະໜັບສະໜູນດ້ານທາງດ້ານຄວາມຮູ້, ຄວາມສາມາດ,ດ້ານງົບປະມານ ຫຼື ອື່ນໆ ເພື່ອສະໜັບສະໜູນການສ້າງຄວາມເຂັ້ມແຂງໃຫ້ກັບ ສຄອຊ.

ສະມາຊິກກິດຕິມະສັກບໍ່ມີສິດໃນການເລືອກຕັ້ງ, ບໍ່ມີສິດສະໝັກຮັບເລືອກຕັ້ງເຂົ້າໃນຕຳແໜ່ງຄະນະບໍລິ ຫານງານ, ຄະນະປະຈຳ, ຄະນະກວດກາ, ນາຍຄັງ, ເລຂາທິການ ແລະ ບໍ່ມີສິດລົງຄະແນນສຽງຕົກລົງບັນຫາຕ່າງໆທີ່ສຳຄັນຂອງ ສຄອຊ.

**ມາດຕາ 27. ສິດ ແລະ ໜ້າທີ່ຂອງສະມາຊິກ ສຄອຊ**

ສະມາຊິກຂອງ ສຄອຊ ມີສິດ ແລະ ໜ້າທີ່ ດັ່ງນີ້:

**ກ. ສິດຂອງສະມາຊິກ ສຄອຊ**

1. ສະເໜີຄວາມຄິດເຫັນຕໍ່ ຄະນະບໍລິຫານງານ, ຄະນະປະຈຳ, ປະທານ ສຄອຊ ກ່ຽວກັບບັນຫາຕ່າງໆ ເພື່ອປັບປຸງການເຄື່ອນໄຫວຂອງ ສຄອຊ ໃຫ້ດີຂຶ້ນ, ເພື່ອປົກປ້ອງສິດຜົນປະໂຫຍດຂອງຕົນ ແລະ ຫົວໜ່ວຍທຸລະກິດທົ່ວໄປ;

2. ເຂົ້າຮ່ວມກອງປະຊຸມໃຫຍ່ ແລະ ກອງປະຊຸມວິສາມັນ, ເຂົ້າຮ່ວມເລືອກຕັ້ງ ຫຼື ສະໝັກຮັບເລືອກຕັ້ງເຂົ້າເປັນຄະນະບໍລິຫານງານ, ຄະນະປະຈຳຂອງ ສຄອຊ;
3. ລົງຄະແນນສຽງຕົກລົງຮັບຮອງບັນຫາສຳຄັນຂອງ ສຄອຊ ໃນກອງປະຊຸມວິສາມັນຂອງ ສຄອຊ;
4. ນຳໃຊ້ສະຖານທີ່ຂອງ ຫ້ອງການ ສຄອຊ ໃນການຈັດກອງປະຊຸມ, ຝຶກອົບຮົມ ແລະ ອື່ນໆ ທີ່ຕິດພັນກັບວຽກງານຂອງ ສຄອຊ ຕາມການຕົກລົງຂອງປະທານ ສຄອຊ;
5. ໄດ້ຮັບບູລິມະສິດໃນການເຂົ້າເຖິງຂໍ້ມູນຕ່າງໆ ເປັນຕົ້ນ ຂໍ້ມູນຂ່າວສານກ່ຽວກັບການຄ້າ, ການລົງທຶນຢູ່ພາຍໃນ ແລະ ຕ່າງປະເທດ, ຕະຫຼາດສິນຄ້າຢູ່ພາຍໃນ, ຕ່າງປະເທດ ແລະ ອື່ນໆກ່ຽວກັບການດຳເນີນທຸລະກິດ;
6. ໄດ້ຮັບບູລິມະສິດໃນການເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ, ສຳມະນາ ທີ່ຈັດຂຶ້ນໂດຍ ສຄອຊ ເພື່ອຍົກລະດັບຄວາມຮູ້ຄວາມສາມາດໃນການດຳເນີນທຸລະກິດ;
7. ໄດ້ຮັບບູລິມະສິດໃນການເຂົ້າຮ່ວມກອງປະຊຸມພົບປະລະຫວ່າງນັກທຸລະກິດພາຍໃນ ແລະ ຕ່າງປະເທດ ເພື່ອແລກປ່ຽນບົດຮຽນ ແລະ ຈັດຫາຄູ່ຮ່ວມມືກ່ຽວກັບການຄ້າ, ການລົງທຶນຢູ່ພາຍໃນ ແລະ ຕ່າງປະເທດ;
8. ໄດ້ຮັບບູລິມະສິດພິຈາລະນາສົ່ງເຂົ້າຮ່ວມຄັດເລືອກເປັນນັກທຸລະກິດດີເດັ່ນຢູ່ພາຍໃນ ແລະ ສາກົນ;
9. ໄດ້ຮັບບູລິມະສິດແບ່ງປັນງົບປະມານ, ການນຳໃຊ້ວັດຖຸດິບ, ການເຂົ້າຮ່ວມງານ ແລະ ອື່ນໆ ທີ່ລັດຖະບານຕົກລົງມອບໃຫ້ ສຄອຊ ເປັນຜູ້ຈັດແບ່ງໃຫ້ບັນດາຫົວໜ່ວຍທຸລະກິດ;
10. ເຂົ້າຮ່ວມງານວາງສະແດງສິນຄ້າ, ງານຕະຫຼາດນັດ ແລະ ງານອື່ນໆ ຢູ່ພາຍໃນ ແລະ ຕ່າງປະເທດ ທີ່ຈັດຂຶ້ນ ຫຼື ຮັບຜິດຊອບໂດຍ ສຄອຊ;
11. ໄດ້ຮັບການໃຫ້ຄຳປຶກສາ, ຄຳແນະນຳຈາກຄະນະບໍລິຫານງານ, ຄະນະເລຂາທິການຂອງ ສຄອຊ ກ່ຽວກັບການດຳເນີນທຸລະກິດ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຂໍ້ຂັດແຍ່ງດ້ານແຮງງານ ແລະ ອື່ນໆ ເພື່ອປົກປ້ອງສິດຜົນປະໂຫຍດຂອງສະມາຊິກໂດຍຊອບທຳ;
12. ໄດ້ຮັບສິດອື່ນຕາມທີ່ກຳນົດໄວ້ໃນກົດໝາຍຂອງສປປ ລາວ.

### ຂ. ໜ້າທີ່ຂອງສະມາຊິກ ສຄອຊ

1. ສະໜັບສະໜູນ, ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມຂະບວນການ, ການເຄື່ອນໄຫວກິດຈະກຳຕ່າງໆທີ່ ສຄອຊ ຈັດຂຶ້ນ;

DRAFT

2. ໂຄສະນາ, ເຜີຍແຜ່ກຽດຕິຄຸນ, ຊື່ສຽງພາລະບົດບາດ, ຄຸນງາມຄວາມດີຂອງ ສຄອຊ ໃຫ້ສັງຄົມຮູ້ຈັກຢ່າງກວ້າງຂວາງ;
3. ປະຕິບັດຕາມກົດໝາຍ, ຄ່າບຳລຸງສະມາຊິກ, ພັນທະ ແລະ ເງື່ອນໄຂຕ່າງໆຂອງການເຂົ້າເປັນສະມາຊິກຕາມທີ່ກຳໃນກົດລະບຽບຂອງ ສຄອຊ.

**ຄ. ເງື່ອນໄຂຂອງສະມາຊິກກິດຕິມະສັກ**

ສະມາຊິກກິດຕະມະສັກຂອງ ສຄອຊ ປະກອບມີເງື່ອນໄຂດັ່ງນີ້:

1) ເປັນນິຕິບຸກຄົນ ຫຼືຕົວແທນຂອງນິຕິບຸກຄົນຫຼືຕົວແທນຂອງສາມະຄົມ ແລະກຸ່ມທຸລະກິດທີ່ໄດ້ລົງ ທະບຽນທຸລະກິດຕາມກົດໝາຍ - ລະບຽບການຂອງ ສປປ ລາວ ຫຼື ປະເທດຕ່າງໆຢ່າງຖືກຕ້ອງ.
2) ເປັນນິຕິບຸກຄົນ ຫຼືຕົວແທນຂອງນິຕິບຸກຄົນ ຫຼືຕົວແທນຂອງສາມະຄົມ ແລະກຸ່ມທຸລະກິດທີ່ບໍ່ ມີປະຫວັດເບື້ອງຫຼັງ ຫຼືປັດຈຸບັນໃນການເຄື່ອນໄຫວເປັນປໍລະປັກຕໍ່ສປປລາວ ຫຼືບໍ່ນອນໃນບັນຊີ ຜູ້ຕ້ອງຫ້າມ ຫຼື ຖືກດຳເນີນຄະດີລະຫວ່າງປະເທດ,
3) ເປັນນິຕິບຸກຄົນ ຫຼືຕົວແທນຂອງນິຕິບຸກຄົນ ຫຼືຕົວແທນຂອງສາມະຄົມ ແລະກຸ່ມທຸລະກິດທີ່ມີຜົນປະກອບການສາມາດເປັນຕົວຢ່າງແກ່ ສາມະຊິກຂອງສຄອ, ໄດ້ຮັບຄວາມເຊື່ອຖື ຈາກສັງຄົມ ແລະ ພາກທຸລະກິດຢ່າງກວ້າງຂວາງ,
4) ເປັນນິຕິບຸກຄົນຫຼືຕົວແທນຂອງນິຕິບຸກຄົນຫຼືຕົວແທນຂອງສາມະຄົມແລະກຸ່ມທຸລະກິດທີ່ມີຄວາມເຈົ້າໃຈ, ມີຄວາມເອກະພາບກັບນະໂຍບາຍ ແລະ ຍອມຮັບແນວທາງພັດທະນາເສດຖະກິດຂອງ ພັກ - ລັດຖະບານ ສປປ ລາວ,

**ມາດຕາ 28. ການກຳນົດສາມະຊິກຂອງ ສຄອ ແຫ່ງຊາດລາວ, ສຄອ ແຂວງ ແລະ ສຄອ ນະຄອນຫຼວງ, ສຄອ ນະຄອນ ແລະ ເມືອງ.**

*ຫົວໜ່ວຍທຸລະກິດ, ບຸກຄົນ ແລະ ຕົວແທນຂອງນິຕິບຸກຄົນທີ່ເປັນທຸລະກິດທີ່ຂຶ້ນທະບຽນຖືກຕ້ອງຕາມກົດໝາຍວິສາຫະກິດຂອງສປປລາວ,ທີ່ມີທຶນຈົດທະບຽນນັບແຕ່ 800.000.000 ກີບ (ແປດຮ້ອຍລ້ານ) ຂຶ້ນໄປເປັນສາມະຊິກຂອງສຄອຊ, ແຕ່ຖ້າທຸລະກິດຕັ້ງຢູ່ແຂວງໃດແມ່ນໃຫ້ໄປຈົດທະບຽນເປັນສາມະຊິກຂອງສຄອແຂວງນັ້ນກ່ອນ ຈິ່ງມາຈົດເຂົ້າເປັນມະຊິກຂອງ ສຄອຊ.*

*ສະເພາະກໍລະນີທຸລະກິດທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ ແລະມີທຶນຈົດທະບຽນແຕ່ 800.000.000 ກີບ (ແປດຮ້ອຍລ້ານ) ຂຶ້ນໄປໃຫ້ຈົດທະບຽນເປັນສາມະຊິກຂອງ ສຄອຊ ແລະກໍສາມາດໄປຈົດເປັນສາມະຊິກຂອງ ສຄອ ນະຄອນ ຫຼວງ ອີກກໍໄດ້. ສ່ວນຫົວໜ່ວຍທຸລະກິດ,ບຸກຄົນ ແລະຕົວແທນຂອງນິຕິບຸກຄົນທີ່ເປັນທຸລະກິດທີ່ຂຶ້ນທະບຽນ*

*ຖືກຕ້ອງຕາມກົດໝາຍວິສາຫະກິດຂອງສປປລາວ,ມີທຶນຈົດທະບຽນແຕ່ 800.000.000 ກີບ (ແປດຮ້ອຍລ້ານ) ກີບ ລົງມາແມ່ນໃຫ້ໄປຈົດທະບຽນເປັນສາມະຊິກຂອງ ສຄອ ແຂວງ ຫຼື ນະຄອນຫຼວງ, ນະຄອນ ຫຼື ເມືອງ.*

**ມາດຕາ 29. ເງື່ອນໄຂເຂົ້າເປັນສາມະຊິກ**

ປະຕິບັດຕາມດຳລັດສະບັບເລກທີ 237/ນຍ,ລົງວັນທີ 18 ພຶດສະພາ 2020 ທຸກາງຫືວໜ່ວຍທຸລະກິດທີ່ມີທຶນ ຈົດທະບຽນນັບແຕ່ 800.000.000 ກີບ (ແປດຮ້ອຍລ້ານ) ຂຶ້ນໄປໃຫ້ເຂົ້າເປັນສາມະຊິກຂອງສຄອແຂວງ ຫຼື ສຄອ ນະຄອນຫຼວງ ຫຼື ສຄອ ແຫ່ງຊາດລາວ. ກະຊວງອຸດສາຫະກຳ - ການຄ້າ, ພະແນກ ອຸດສາຫະກຳ ການຄ້າແຂວງແລະ ນະຄອນຫຼວງຈະເປັນຜູ້ເອື້ອອຳນວຍດ້ານຂໍ້ມູນສ້າງຄວາມສະດວກເພື່ອໃຫ້ຫົວໜ່ວຍ ທຸລະກິດເຫຼົ່ານັ້ນໄດ້ເຂົ້າມາເປັນສາ ມະຊິກ ແລະ ເຂົ້າມາສັງກັດຢູ່ການຈັດຕັ້ງ.

**ຜູ້ທີ່ສະມັກເຂົ້າເປັນສາມະຊິກຕ້ອງປະຕິບັດຕາມຂັ້ນຕອນລຸ່ມນີ້:**

- ຍື່ນຄຳຮ້ອງ ຫຼື ສະແດງເຈດຈຳນົງໄປຍັງ ເລຂາທິການ ຕາມແບບຟອມທີ່ກຳນົດໄວ້, ພາຍ ໃນເວລາ 3 ວັນຈະ ໄດ້ຮັບຄຳເຫັນຈາກ ສຄອ ແຕ່ລະຂັ້ນ ຢ່າງເປັນທາງການ,
- ພາຍຫຼັງໄດ້ຮັບເຂົ້າເປັນສາມະຊິກຢ່າງເປັນທາງການຜູ້ກ່ຽວຫຼືຕົວແທນຕ້ອງຊຳລະ ຄ່າບຳລຸງປະຈຳປີ ໃນເວລາ ຮັບໃບທະບຽນ ແລະ ບັດສາມະຊິກຕາມອັດຕາທີ່ກຳນົດໄວ້ຢູ່ ມາດຕາ........

**ການຍົກເລີກທະບຽນ ແລະ ບັດສາມະຊິກຂອງ ສຄອ ຈະສິ້ນສຸດລົງໃນກໍລະນີລຸ່ມນີ້:**

- ບຸກຄົນ ຫຼື ນິຕິບຸກຄົນນັ້ນໄດ້ເສຍຊີວິດ ຫຼື ໝົດຄວາມເປັນນິຕິບຸກຄົນ,
- ເສຍເງື່ອນໄຂ ແລະ ມາດຕະຖານໃດນຶ່ງທີ່ກຳນົດໃນມາດຕາ 24, 25 ແລະ 26,
- ຍື່ນໃບລາອອກດ້ວຍຕົນເອງ ຫຼື ໄດ້ຮັບການມອບສິດໂດຍເຫດຜົນ ແລະ ໄດ້ຮັບການ ອະນຸມັດໃຫ້ລາອອກ ຂອງຄະນະກຳມະການບໍລິຫານ ສຄອຊ,
- ຖືກພິພາກສາໃຫ້ທຸລະກິດເປັນຜູ້ລົ້ມລະລາຍໃນກິດຈະການຂອງຕົນ ແລະ ຕົວແທນ,
- ຖືກການຈັດຕັ້ງຂອງ ສຄອຊ ຕັດສິນເປັນຜູ້ທີ່ຂາດຄຸນສົມບັດ ແລະ ຂາດ ຄວາມສາມາດທີ່ຈະເປັນສາມະຊິກ ຂອງ ສຄອ,
- ຖືກພິພາກສາຈາກສານໃຫ້ຈຳຄຸກໃນຄະດີອາຍາ,
- ຖືກລົງຄະແນນສຽງ 2/3 ຂອງຄະນະກຳມະການບໍລິຫານໃຫ້ໝົດສິດເປັນສາມະຊິກໃນ ເຫດຜົນທີ່ໃຊ້ສິດ ອຳນາດ ແລະ ໜ້າທີ່ຂອງຕົນສ້າງຄວາມເສຍຫາຍຕໍ່ກັບ ສຄອຊ ຫຼື ສາມະຊິກໂດຍທາງກົງ ຫຼື ທາງອ້ອມ,
- ບໍ່ປະຕິບັດກົດລະບຽບຂອງ ສຄອ, ບໍ່ຕໍ່ອາຍຸຂອງທະບຽນສາມະຊິກ,ບໍ່ຊຳລະຄ່າບຳລຸງສາມະຊິກຕິດຕໍ່ກັນ2ປີ ຊ້ອນ,ຫຼັງຈາກໄດ້ຮັບຄຳເຕືອນມາແລ້ວຄັ້ງສຸດທ້າຍ.

DRAFT

**ມາດຕາ 30. ຄ່າລົງທະບຽນ ແລະ ເງິນບຳລຸງ ສາມະຊິກສາມັນ, ສາມະຊິກສົມທົບ ແລະ ສາມະຊິກກິຕິມະສັກ**

ການເກັບຄ່າທຳນຽມ, ພັນທະ ແລະ ຄ່າບຳລຸງສາມະຊິກ ຂອງ ສຄອຊ, ສຄອ ແຂວງ, ນະຄອນຫຼວງ, ນະຄອນ ແລະ ເມືອງ ໄດ້ພິຈາລະນາເປັນແຕ່ລະປີດ້ວຍຄວາມສາມາດ ແລະ ສົມເຫດສົມຜົນ. ຄ່າສາມະຊິກຂອງສຄອ ແມ່ນໄດ້ຈັດເປັນ 4 ປະເພດໂດຍອີງຕາມຂະໜາດຂອງທຸລະກິດໂດຍຖືເອົາທຶນຈົດທະບຽນເປັນບ່ອນກຳນົດຄື:

**ຄ່າບຳລຸງສາມະຊິກ ຕໍ່ປີ ຕໍ່ ນິ່ງທະບຽນສາມະຊິກຈະກຳນົດດັ່ງນີ້:**

2.1. ຖ້າຈົດທະບຽນແຕ່ 50,000,000 ກີບ ເຖິງ 200,000,000 ກີບຕ້ອງຈ່າຍຄ່າບຳລຸງ 500,000 ກີບ(ຫ້າແສນກີບ)ຕໍ່ປີ,

2.2. ຖ້າຈົດທະບຽນແຕ່ 201,000,000ກີບ ເຖິງ 400,000,000 ກີບຕ້ອງຈ່າຍຄ່າບຳລຸງ 700,000 ກີບ (ເຈັດແສນກີບ) ຕໍ່ປີ,

2.3. ຖ້າຈົດທະບຽນແຕ່ 401,000,000 ກີບ ເຖິງ 800,000,000 ກີບຕ້ອງຈ່າຍຄ່າບຳລຸງ 1,000,000 ກີບ (ໜຶ່ງລ້ານກີບ) ຕໍ່ປີ,

2.4. ຖ້າຈົດທະບຽນແຕ່ 801,000,000 ກີບ ຂຶ້ນໄປຕ້ອງຈ່າຍຄ່າບຳລຸງ 2,000,000 ກີບ (ນຶ່ງລ້ານ ກີບ) ຕໍ່ປີ.

## ໝວດທີ V

## ກອງປະຊຸມຂອງ ສຄອຊ

**ມາດຕາ 31. ກອງປະຊຸມຂອງສຄອຊ**

ສຄອຊ ມີກອງປະຊຸມຕ່າງໆດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມວິສາມັນ;
3. ກອງປະຊຸມປະຈຳປີຂອງຄະນະບໍລິຫານງານ.

**ມາດຕາ 32. ກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ແມ່ນອົງການນໍາພາສູງສຸດຂອງ ສຄອຊ, ເປີດຂຶ້ນ 3ປີ/ຄັ້ງ ຕາມຮູບແບບກອງປະຊຸມໃຫຍ່ທົ່ວສະມາຊິກ ຫຼື ກອງປະຊຸມໃຫຍ່ຕົວແທນສະມາຊິກ ຕາມການຕົງລົງຂອງຄະນະບໍລິຫານງານ ຫຼື ກົດລະບຽບຂອງ ສຄອຊ.

ກອງປະຊຸມໃຫຍ່ ສຄອຊ ມີໜ້າທີ່ສໍາຄັນ ແລະ ຕົ້ນຕໍ ດັ່ງນີ້:

1. ຜ່ານ ແລະ ຮັບຮອງເອົາບົດລາຍງານສະພາບການປະຕິບັດໜ້າທີ່ໃນໄລຍະທີ່ຜ່ານມາ ແລະ ແຜນການ ເຄື່ອນໄຫວໃນຕໍ່ໜ້າ;
2. ຜ່ານ ແລະ ຮັບຮອງເອົາບົດສະຫຼຸບລາຍງານສະພາບການຄຸ້ມຄອງ ແລະ ໃຊ້ຈ່າຍງົບປະມານຂອງ ສຄອຊ;
3. ດໍາເນີນການເລືອກຕັ້ງ ແລະ ຮັບຮອງເອົາຄະນະບໍລິຫານງານຊຸດໃໝ່;
4. ຜ່ານ ແລະ ຮັບຮອງເອົາຮ່າງກົດລະບຽບຂອງ ສຄອຊ ທີ່ຮ່າງຂຶ້ນໃໝ່ ຫຼື ຮ່າງສະບັບປັບປຸງ;
5. ຕົກລົງບັນຫາສໍາຄັນອື່ນໆຂອງ ສຄອຊ.

ຫຼັກການດໍາເນີນກອງປະຊຸມ, ຜູ້ເຂົ້າຮ່ວມ ແລະ ການລົງຄະແນນສຽງ ໃນກອງປະຊຸມໃຫຍ່ ໃຫ້ປະຕິບັດຕາມການກໍານົດຢູ່ໃນກົດລະບຽບຂອງ ສຄອຊ.

**ມານຕາ 33. ກອງປະຊຸມວິສາມັນ**

ກອງປະຊຸມວິສາມັນຂອງ ສຄອຊ ເປີດຂຶ້ນເມື່ອມີສະມາຊິກສາມັນຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສະມາຊິກສາມັນທັງໝົດ ຫຼື ມີສະມາຊິກໃນຄະນະບໍລິຫານງານຢ່າງໜ້ອຍຈໍານວນ 2/3 ຂຶ້ນໄປ ຮຽກຮ້ອງເປີດກອງປະຊຸມໃຫຍ່ວິສາມັນຂຶ້ນ ເພື່ອຕົກລົງບັນຫາສໍາຄັນໃດໜຶ່ງ. ຫຼັກການດໍາເນີນກອງປະຊຸມ, ຜູ້ເຂົ້າຮ່ວມ ແລະ ການລົງຄະແນນສຽງໃນກອງປະຊຸມວິສາມັນ ໃຫ້ປະຕິບັດຕາມການກໍານົດຢູ່ໃນກົດລະບຽບຂອງ ສຄອຊ.

**ມາດຕາ 34. ກອງປະຊຸມປະຈໍາປີຂອງຄະນະບໍລິຫານ**

ກອງປະຊຸມປະຈໍາປີຂອງຄະນະບໍລິຫານງານເປີດຂຶ້ນປີລະຄັ້ງ ເພື່ອພິຈາລະນາບັນຫາຕົ້ນຕໍ ດັ່ງນີ້:

1. ພິຈາລະນາຮັບຮອງເອົາບົດສະຫຼຸບການເຄື່ອນໄຫວວຽກງານໃນໜຶ່ງປີຜ່ານມາ ແລະ ຜ່ານແຜນການເຄື່ອນ ໄຫວໃນປີຕໍ່ໜ້າ;
2. ພິຈາລະນາຜ່ານ ແລະ ຮັບຮອງເອົາບົດສະຫຼຸບການໃຊ້ຈ່າຍງົບປະມານໃນໜຶ່ງປີຜ່ານມາ ແລະ ແຜນການງົບປະມານໃນປີຕໍ່ໄປ;
3. ຮັບຮອງການກວດສອບງົບປະມານລາຍຮັບ ແລະ ລາຍຈ່າຍຈາກອົງການກວດສອບ;
4. ຜ່ານ ແລະ ຮັບຮອງເອົາບັນດາໂຄງການຕ່າງໆທີ່ສໍາຄັນ ແລະ ບັນຫາສໍາຄັນອື່ນໆ.

## ໝວດທີ VI

## ການເງິນ

DRAFT

**ມາດຕາ 35. ການເງິນ-ງົບປະມານ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ມີການເງິນ-ງົບປະມານສະເພາະ ເພື່ອປະຕິບັດພາລະບົດບາດ ແລະ ໜ້າທີ່ວຽກງານຂອງຕົນ. ການເງິນຂອງ ສຄອຊ ໄດ້ມາຈາກແຫຼ່ງຕ່າງໆດັ່ງນີ້:

1. ຄ່າທຳນຽມ ແລະ ຄ່າບຳລຸງຈາກສະມາຊິກຂອງ ສຄອຊ ທັງຫມົດ;
2. ຄ່າການບໍລິການຂອງສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ (ສບວ);
3. ຄ່າການບໍລິການຂອງສູນສົ່ງເສີມການຕະຫຼາດ, ມາດຕະຖານສິນຄ້າ ແລະ ຜະລິດຕະພັນລາວ;
4. ຄ່າການບໍລິການຂອງສູນບໍລິການຂໍ້ມູນວິສາຫະກິດ ແລະ ທຸລະກິດ;
5. ຄ່າການບໍລິການໃຫ້ການຊ່ວຍເຫຼືອດ້ານເອກະສານ ຫຼື ໃຫ້ຄຳແນະນຳຕ່າງໆ ແກ່ການສ້າງຕັ້ງທຸລະກິດໃໝ່ ລວມທັງການໃຫ້ການຊ່ວຍເຫຼືອໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
6. ຄ່າການບໍລິການໃນການຈັດຝຶກອົບຮົມສຳມະນາຕ່າງໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ທຸລະກິດ ແລະ ອື່ນໆ;
7. ຄ່າບໍລິການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ການບໍລິການອື່ນໆ ທີ່ລັດຖະບານມອບໝາຍ;
8. ຄ່າການບໍລິການຈັດງານວາງສະແດງສິນຄ້າ, ຕະຫຼາດນັດຢູ່ພາຍໃນ ແລະ ຕ່າງປະເທດ;
9. ຄ່າບໍລິການໃຫ້ຄຳປຶກສາດ້ານຕ່າງໆແກ່ບັນດາຫົວໜ່ວຍທຸລະກິດທີ່ເປັນສະມາຊິກ ແລະ ບໍ່ໄດ້ເປັນສະມາຊິກຂອງ ສຄອຊ ຕາມສິດ ແລະ ໜ້າທີ່ຂອງຕົນ;
10. ເງິນຊ່ວຍເຫຼືອ ຫຼື ສະໜັບສະໜູນຈາກບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງລັດ, ອົງການຈັດຕັ້ງສາກົນທີ່ປະຈຳຢູ່ສປປລາວ ແລະ ຢູ່ຕ່າງປະເທດ.

**ມາດຕາ 36. ການຄຸ້ມຄອງລາຍຮັບ-ລາຍຈ່າຍ**

ການຄຸ້ມຄອງລາຍຮັບລາຍຈ່າຍຂອງ ສຄອ ແຫ່ງຊາດລາວ ໃຫ້ປະຕິບັດຕາມການກຳນົດຢູ່ໃນກົດລະບຽບການຄຸ້ມຄອງການເງິນຂອງ ສຄອຊ ແລະ ລະບຽບກົດໝາຍຂອງພາກລັດທີ່ກ່ຽວຂ້ອງ.

ສຄອ ແຂວງ ແລະ ສຄອ ນະຄອນຫຼວງ, ນະຄອນ, ເມືອງ ຈະມີງົບປະມານ, ແຫຼ່ງລາຍຮັບ, ລະບຽບການຄຸ້ມຄອງ ແລະ ລະ ບົບການກວດກາການເງິນ - ການບັນຊີສະເພາະຂອງຕົນເອງເພື່ອຮັບໃຊ້ການເຄື່ອນໄຫວ ວຽກງານໃຫ້ມີປະສິດທິຜົນ.

**ສຳລັບຂອບເຂດການເບີກຈ່າຍງົບປະມານຂອງ ສຄອ ແຫ່ງຊາດລາວແມ່ນ ຈະແບ່ງຕາມຕຳແໜ່ງຄວາມຮັບຜິດຊອບຂອງຄະນະບໍລິຫານງານຄື:**

(1) ປະທານຂອງ ສຄອຊ ສາມາດສັ່ງຈ່າຍງົບປະມານໄດ້ບໍ່ເກີນ: 50,000,000 ກີບ (ຫ້າສິບ ລ້ານ ກີບ),

(2) ຮອງປະທານ( ຄະນະປະຈຳ) ຂອງ ສຄອ ແຫ່ງຊາດລາວສາມາດສັ່ງຈ່າຍງົບປະມານໄດ້ບໍ່ເກີນ: 30,000,000 ກີບ ( ສາມສິບ ລ້ານ ກີບ),

DRAFT

(3) ເລຂາທິການ ຂອງ ສຄອ ແຫ່ງຊາດລາວສາມາດສັ່ງຈ່າຍງົບປະມານໄດ້ບໍ່ເກີນ: 5,000,000 ກີບ ( ຫ້າລ້ານກີບ),

ສ່ວນລາຍການສັ່ງຈ່າຍທີ່ຫຼາຍກວ່າ 50,000,000 ກີບຂື້ນໄປແມ່ນຕ້ອງນຳເຂົ້າເປີກສາຫາ ລືຢູ່ກອງປະຊຸມຂອງຄະນະບໍລິຫານງານ/ຄະນະປະຈຳ ສຄອຊ ,ເພື່ອອະນຸມັດງົບປະມານດັ່ງກ່າວ.

ຂະບວນການສັ່ງຈ່າຍແຕ່ລະຄັ້ງແມ່ນຈະກຳນົດເປັນລາຍລັກອັກສອນທີ່ມີຕົວເລກສາມາດກວດ ກາໄດ້ຢ່າງຊັດເຈນ ແລະ ຖືກຕ້ອງ, ມີລາຍເຊັນຂອງຜູ້ທີ່ກ່ຽວຂ້ອງ ແລະ ສ້າງເອກະສານເປັນຫຼັກຖານ ຕາມລະ ບຽບຂອງການເງິນຂອງ ສຄອ ແຫ່ງຊາດລາວ.

**ມາດຕາ 37. ການກວດສອບບັນຊີ-ການເງິນ**

ລະບົບບັນຊີການເງິນຂອງ ສຄອຊ ຖືກກວດສອບໂດຍນັກກວດສອບບັນຊີພາຍໃນ ແລະ ພາຍນອກ.
ລະບຽບ ແລະ ຂັ້ນຕອນການກວດສອບແມ່ນປະຕິບັດຕາມລະບຽບການກວດສອບບັນຊີຂອງ ສປປ ລາວ.

## ໝວດທີ VII

## ສະມາຄົມເສດຖະກິດ, ກຸ່ມທຸລະກິດ ແລະ ສະພາການຄ້າ ແລະ ອຸດສາຫະກຳ ຕ່າງປະເທດ ທີ່ຕັ້ງຢູ່ ສປປ ລາວ

**ມາດຕາ 38. ທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ.**

ບັນດາຂັ້ນຕອນການສ້າງ, ພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງ ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ, ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ ແມ່ນໃຫ້ປະຕິບັດຕາມກົດໝາຍຂອງລັດທີ່ໄດ້ກຳນົດໄວ້.

**ມາດຕາ 39. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ**

ສະມາຄົມເສດຖະກິດ ແລະ ກຸ່ມທຸລະກິດ ພາຍຫຼັງໄດ້ຮັບການສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍຂອງສປປ ລາວ ໃຫ້ຢູ່ພາຍໃຕ້ການຄຸ້ມຄອງຂອງ ສຄອຊ.

**ມາດຕາ40. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ**

ສະພາການຄ້າ ແລະ ອຸດສາຫະກຳຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ ພາຍຫຼັງໄດ້ຮັບການສ້າງຕັ້ງຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ ໃຫ້ຢູ່ພາຍໃຕ້ການຄຸ້ມຄອງຂອງ ສຄອຊ.

DRAFT

# ໝວດທີ VIII
# ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 41. ການແກ້ໄຂຂໍ້ຂັດແຍ້ງ ລະຫວ່າງສາມະຊິກດ້ວຍກັນ ຫຼື ບໍ່ແມ່ນສາມະຊິກ**

ການແກ້ໄຂຂໍ້ຂັດແຍ້ງຂອງ ສຄອ ແມ່ນດຳເນີນຕາມແຕ່ລະກໍລະນີທີ່ເກີດຂຶ້ນ. ຖ້າເກີດຂຶ້ນໃນລະ ດັບແຂວງ ຫຼື ນະຄອນຫຼວງແມ່ນມອບໃຫ້ ສຄອ ແຂວງ, ສຄອ ນະຄອນຫຼວງ, ນະຄອນ ຫຼື ເມືອງ ເປັນຜູ້ຈັດຕັ້ງການໄກ່ເກ່ຍ ແລະ ແກ້ໄຂດ້ວຍວິທີການປານີປານອມກັນພາຍໃນເສຍກ່ອນ. ຖ້າຫາກກໍລະນີບັນຫານັ້ນບໍ່ສາມາດໄກ່ເກ່ຍໄດ້ໃນລະດັບທ້ອງຖິ່ນ. ສຄອຊ (ໜ່ວຍງານນິຕິກຳ)ຈະເຂົ້າໄປຊ່ວຍດຳເນີນຂະບວນ ການ ໄກ່ເກ່ຍ ຫຼື ແກ້ໄຂ ຮ່ວມກັນກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ. ແຕ່ຖ້າຍັງບໍ່ສາມາດໄກ່ເກ່ຍ -ແກ້ໄຂໄດ້ແມ່ນ ສຄອຊ ຈະມອບໃຫ້ອົງການໄກ່ເກ່ຍ ແລະແກ້ໄຂຂໍ້ຂັດແຍ້ງນອກສານທາງດ້ານເສດຖະກິດເປັນຜູ້ດຳເນີນການແກ້ໄຂຕາມລະບຽບ - ກົດໝາຍ ແຫ່ງ ສປປ ລາວ.

ມາດຕາ 44. ການແກ້ໄຂຂໍ້ຂັດແຍ້ງ ລະຫວ່າງສາມະຊິກ ກັບນັກທຸລະກິດຕ່າງປະເທດ

ໃນກໍລະນີທີ່ມີຂໍ້ຂັດແຍ້ງເກີດຂຶ້ນລະຫວ່າງສາມະຊິກຂອງ ສຄອຊ ກັບນັກທຸລະກິດ ຕ່າງປະເທດແມ່ນໜ້າທີ່ຂອງ ສຄອຊ ເປັນຜູ້ເຂົ້າໄປໄກ່ເກ່ຍໃນເບື້ອງຕົ້ນເສຍກ່ອນ.ແຕ່ຖ້າຍັງບໍ່ສາມາດໄກ່ເກ່ຍແກ້ໄຂໄດ້ແມ່ນຈະມອບໃຫ້ອົງການໄກ່ເກ່ຍ -ແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດນອກສານເປັນຜູ້ດຳເນີນການແກ້ໄຂຕາມລະບຽບ-ກົດໝາຍແຫ່ງ ສປປ ລາວ.ຖ້າຫາກເປັນຂໍ້ຂັດແຍ້ງກັບຕ່າງປະເທດແມ່ນມອບໃຫ້ອົງການໄກ່ເກ່ຍແລະແກ້ໄຂຂໍ້ຂັດແຍ້ງທາງດ້ານເສດຖະກິດນອກສານຂອງສາ ກົນ ທີ່ຄູ່ກໍລະນີໄດຕົກລົງກັນໄວ້ກ່ອນນັ້ນ.

# ໝວດທີ IX
# ຕາປະທັບ

**ມາດຕາ 42. ຕາປະທັບ**

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ສະພາການຄ້າ ແລະ ອຸດສາຫະກຳ ແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ມີຕາປະທັບເປັນຂອງຕົນເອງ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ຕາມດຳລັດວ່າດ້ວຍຕາປະທັບ.

**ມາດຕາ 43. ເຄື່ອງໝາຍ ສຄອຊ**

ເຄື່ອງໝາຍຂອງ ສຄອ ແຫ່ງຊາດລາວ ແມ່ນ ສັນຍະລັກທີ່ສື່ສານໃຫ້ເຂົ້າໃຈເຖິງອົງປະກອບພາຍໃນຂອງ ສຄອ. ເຄື່ອງໝາຍປະກອບດ້ວຍ:

1) ເຄື່ອງໝາຍເປັນຮູບວົງມົນ ທີ່ມີພື້ນເປັນສີຂາວ,

2) ມີຮູບທາດຫຼວງສີຄຳຢູ່ໃຈກາງວົງມົນ ທີ່ໝາຍເຖິງການຈັດຕັ້ງ ລວມສູນຂອງ ສຄອ,



DRAFT

3) ຂອບເບື້ອງເທິງຂຽນຕົວອັກສອນຍໍ້ “ສຄອຊ" ແລະຂອບເບື້ອງລຸ່ມຂຽນຕົວອັກສອນຍໍ້ພາສາອັງກິດ " LNCCI " ທີ່ໝາຍເຖິງຊື່ຂອງ ສຄອຊ,

4) ຢູ່ສອງຂ້າງຂອງຮູບທາດຫຼວງປະກອບຮູບຮວງເຂົ້າແລະມີຮູບປ່າໄມ້ທີ່ຢູ່ລຸ່ມຮວງເຂົ້າທີ່ໝາຍເຖິງ ຄວາມອຸດົມສົມບູນຂອງທຳມະຊາດທີ່ສ້າງຄວາມເອື້ອອຳນວຍຄວາມສະດວກໃຫ້ແກ່ທຸລະກິດ,

5) ຢູ່ກ້ອງຮູບທາດຫຼວງ ແມ່ນຮູບກົນຈັກ ໝາຍເຖິງລະບົບອຸດສາຫະກຳ ແລະ ການຄ້າ,

6) ຢູ່ກ້ອງຮູບກົນຈັກແມ່ນຮູບທ້ອງຟ້າ ແລະ ແສງຕາເວັນທີ່ໝາຍເຖິງແສງສະຫວ່າງຂອງການນຳພາຈາກພັກ ແລະ ລັດຖະບານ,

7) ອົງປະກອບທັງໝົດແມ່ນນອນຢູ່ໃນຂອບເຂດຂອງວົງມົນທີ່ໝາຍເຖິງການຊີ້ນຳແບບລວມສູນຂອງ ສຄອ ແຫ່ງຊາດລາວ.

**ມາດຕາ 44. ເຄື່ອງໝາຍຂອງ ສຄອ ແຂວງ, ນະຄອນຫຼວງ, ນະຄອນ ແລະ ເມືອງ**

ເຄື່ອງໝາຍຂອງ ສຄອ ສຄອ ແຂວງ ແລະ ສຄອ ນະຄອນຫຼວງ ແມ່ນ ສັນຍະລັກທີ່ສື່ສານໃຫ້ເຂົ້າໃຈເຖິງອົງປະກອບພາຍໃນຂອງ ສຄອຢູ່ໃນແຂວງ ແລະ ນະຄອນຫຼວງ. ເຄື່ອງໝາຍປະກອບດ້ວຍ:

1) ເຄື່ອງໝາຍເປັນຮູບວົງມົນ ທີ່ມີພື້ນສີຂາວ,

2) ມີຮູບສັນຍະລັກຂອງແຂວງ ຫຼື ນະຄອນຫຼວງຢູ່ໃຈກາງວົງມົນ ທີ່ໝາຍເຖິງການຈັດຕັ້ງ ລວມສູນຂອງ ສຄອ ແຂວງ ຫຼື ນະຄອນຫຼວງ,

3) ຂອບເບື້ອງເທິງຂຽນຕົວອັກສອນຍໍ້ " ສຄອ + ຊື່ແຂວງ " ແລະຂອບເບື້ອງລຸ່ມຂຽນຕົວອັກສອນຍໍ້ພາສາອັງກິດ"ຕົວອັກສອນຍໍ້ຂອງຊື່ແຂວງ+CCI"ທີ່ໝາຍເຖິງຊື່ຂອງ ສຄອ ແຂວງ, ນະຄອນຫຼວງ, ນະຄອນ ຫຼື ເມືອງ

4) ຢູ່ສອງຂ້າງຂອງຮູບສັນຍະລັກຂອງແຂວງ, ນະຄອນຫຼວງ, ນະຄອນ ຫຼື ເມືອງ ຢູ່ໃຈກາງວົງມົນປະກອບຮູບຮວງເຂົ້າແລະມີຮູບປ່າໄມ້ທີ່ຢູ່ລຸ່ມຮວງເຂົ້າທີ່ໝາຍເຖິງຄວາມອຸດົມສົມບູນຂອງທຳມະຊາດທີ່ສ້າງຄວາມເອື້ອອຳນວຍຄວາມສະດວກໃຫ້ແກ່ທຸລະກິດ,

5) ຢູ່ກ້ອງຮູບຮູບສັນຍະລັກຂອງແຂວງ, ນະຄອນຫຼວງ, ນະຄອນ ຫຼື ເມືອງ ຢູ່ໃຈກາງວົງມົນ ແມ່ນຮູບກົນຈັກ ໝາຍເຖິງລະບົບອຸດສາຫະກຳ ແລະ ການຄ້າ,

6) ຢູ່ກ້ອງຮູບກົນຈັກແມ່ນຮູບທ້ອງຟ້າ ແລະ ແສງຕາເວັນທີ່ໝາຍເຖິງແສງສະຫວ່າງຂອງການນຳພາຈາກພັກ ແລະ ລັດຖະບານ,

7) ອົງປະກອບທັງໝົດແມ່ນນອນຢູ່ໃນຂອບເຂດຂອງວົງມົນທີ່ໝາຍເຖິງການຊີ້ນຳແບບລວມສູນຂອງ ສຄອ.

**ມາດຕາ 45. ກາປະທັບ ຂອງ ສຄອ ແຫ່ງຊາດລາວ**

ກາປະທັບ ຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວມີອົງປະກອບດັ່ງນີ້:

DRAFT

1) ກາປະທັບຂອງ ສຄອ ແຫ່ງຊາດລາວ ເປັນຮູບວົງມົນ,

2) ຢູ່ໃນໃຈກາງວົງມົນມີຮູບກາໝາຍຊາດ,

3) ຢູ່ຂອບວົງມົນເບື້ອງເທິງແມ່ນຂຽນຄຳວ່າ " ກະຊວງອຸດສາຫະກຳ ແລະ ການຄ້າ". ແຕ່ຢູ່ຂອບວົງມົນເບື້ອງລຸ່ມໃຫ້ຂຽນຄຳວ່າ" ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ". ຢູ່ໃນ ລະຫວ່າງສອງຄຳນີ້ຈະຂັ້ນດ້ວຍດາວຫ້າແຈ.

4) ຜູ້ທີ່ມີສິດໃນການນຳໃຊ້ກາປະທັບ(ຈ້ຳກາ) ດັ່ງກ່າວມີຄື: ປະທານ, ຮອງປະທານຜູ້ທີ່ຮັບຜິດຊອບ ແລະ ຄະນະເລຂາທິການເທົ່ານັ້ນ. ຍົກເວັ້ນຜູ້ທີ່ໄດ້ຮັບການມອບໝາຍເປັນລາຍລັກອັກສອນທາງການ.

**ມາດຕາ 46. ກາປະທັບ ຂອງ ສຄອ ແຂວງ, ນະຄອນຫຼວງ, ນະຄອນ ແລະ ເມືອງ**

ກາປະທັບ ຂອງ ສຄອ ແຂວງ, ນະຄອນຫຼວງ, ນະຄອນ, ເມືອງ ມີອົງປະກອບຄື:

1) ກາປະທັບຂອງ ສຄອ ແຂວງ ເປັນຮູບວົງມົນ,

2) ຢູ່ໃນໃຈກາງວົງມົນມີຮູບກາໝາຍຊາດ,

3) ຢູ່ຂອບວົງມົນເບື້ອງເທິງແມ່ນຂຽນຄຳວ່າ " ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ". ແຕ່ຢູ່ຂອບວົງມົນເບື້ອງລຸ່ມໃຫ້ຂຽນຄຳວ່າ"ສະພາການຄ້າ ແລະ ອຸດສາຫະກຳ + ຊື່ຂອງແຂວງ, ນະຄອນຫຼວງ,ນະຄອນ ຫຼືເມືອງ". ຢູ່ໃນລະຫວ່າງສອງຄຳນີ້ຈະຂັ້ນດ້ວຍດາວຫ້າແຈ.

4) ຜູ້ທີ່ມີສິດໃນການນຳໃຊ້ກາປະທັບ(ຈ້ຳກາ) ດັ່ງກ່າວມີຄື: ປະທານ, ຮອງປະທານຜູ້ທີ່ຮັບຜິດຊອບ ແລະເລຂາທິການເທົ່ານັ້ນ.ຍົກເວັ້ນຜູ້ທີ່ໄດ້ຮັບການມອບໝາຍເປັນລາຍລັກອັກສອນທາງການ.

**ມາດຕາ 47. ກາປະທັບ ຂອງ ຜູ້ຕາງໜ້າ ສຄອ ແຫ່ງຊາດລາວຢູ່ຕ່າງປະເທດ**

ກາປະທັບ ຂອງ ຜູ້ຕາງໜ້າ ສຄອ ແຫ່ງຊາດລາວຢູ່ຕ່າງປະເທດມີອົງປະກອບຄື:

1) ກາປະທັບຂອງຜູ້ຕາງໜ້າ ສຄອ ແຫ່ງຊາດລາວຢູ່ຕ່າງປະເທດ ເປັນຮູບວົງມົນ,

2) ຢູ່ໃນໃຈກາງວົງມົນມີ ຮູບກາໝາຍຊາດ,

3) ຢູ່ຂອບວົງມົນເບື້ອງເທິງແມ່ນຂຽນຄຳວ່າ" ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ". ແຕ່ຢູ່ຂອບວົງມົນເບື້ອງລຸ່ມໃຫ້ຂຽນຄຳວ່າ" ຫ້ອງການ ຕາງໜ້າປະຈຳ + ຊື່ປະເທດ ". ຢູ່ໃນ ລະຫວ່າງສອງຄຳນີ້ຈະຂັ້ນດ້ວຍດາວຫ້າແຈ.

4) ຜູ້ທີ່ມີສິດນຳໃຊ້ກາປະທັບ(ຈ້ຳກາ)ດັ່ງກ່າວມີຄື: ຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ ແລະ ເລຂາທິການເທົ່ານັ້ນ. ຍົກເວັ້ນຜູ້ທີ່ໄດ້ຮັບການມອບໝາຍເປັນລາຍລັກອັກສອນທາງການ.

**ມາດຕາ 48. ກາປະທັບ ຂອງ ສາມະຄົມ ແລະ ກຸ່ມທຸລະກິດ**

ກາປະທັບ ຂອງສາມະຄົມ ແລະ ກຸ່ມທຸລະກິດມີອົງປະກອບຕາມລະບຽບການ ແລະກົດໝາຍຂອງ ສປປ ລາວ

## ໝວດທີ X

## ການຫຍຸບເລີກ ແລະ ການຊຳລະສະສາງ ຂອງ ສຄອ

### ມາດຕາ 49. ການຫຍຸບເລີກ

ສຄອຊ, ສຄອ ແຂວງ, ສຄອ ນະຄອນຫຼວງ, ສຄອ ນະຄອນ, ສຄອ ເມືອງ ຈະຖືກຫຍຸບເລີກດ້ວຍບັນດາສາເຫດໃດ ສາຍເຫດນຶ່ງດັ່ງນີ້:

1) ຖ້າມະຕິກອງປະຊຸມສາມັນປະຈຳປີ ຫຼື ກອງປະຊຸມຫຼວງ ຂອງ ສຄອຊ ໄດ້ເປັນເອກະພາບໃຫ້ຫຍຸບເລີກອັນເນື່ອງມາຈາກວິກິດການໃດນຶ່ງດ້ວຍຄະແນນສຽງ 3/4 ຂອງສາມະຊິກສາມັນ ແລະ ວິສາມັນທັງໝົດ,
2) ຖ້າມີຄຳສັ່ງຫຍຸບເລີກຈາກ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ຢ່າງເປັນທາງການ ແລະ ມີລາຍລັກອັກສອນ,
3) ຂະບວນການຫຍຸບເລີກຕ່າງໆທີ່ເກີດຂຶ້ນແມ່ນຕ້ອງໄດ້ຜ່ານຂະບວນການຍຸດຕິທຳຢ່າງຖືກຕ້ອງເສຍກ່ອນຈຶ່ງຖືວ່າແມ່ນການຫຍຸບເລີກໄດ້.

### ມາດຕາ 50. ການຊຳລະສະສາງ

1) ໃນກໍລະນີທີ່ ສຄອຊ ຫາກຖືກຫຍຸບເລີກຢ່າງເປັນທາງການ. ຄະນະບໍລິຫານງານຊຸດນັ້ນຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍ ແລະ ໜີ້ສິນທັງໝົດທີ່ເກີດຂຶ້ນ.
2) ພາຍຫຼັງໄດ້ຊຳລະໜີ້ສິນ ແລະຄ່າເສຍຫາຍທີ່ເກີດຂຶ້ນນັ້ນແລ້ວ, ສ່ວນທີ່ເຫຼືອແມ່ນມອບເຂົ້າເປັນຊັບສິນບັດຂອງລັດຖະບານທັງໝົດ.

## ໝວດທີ XI

## ການປະຕິບັດ ນະໂຍບາຍ ແລະ ການປະຕິບັດວິໄນຕໍ່ຜູ້ທີ່ລະເມີດ ກົດລະບຽບ ຂອງ ສະພາການຄ້າ ແລະ ອຸດສາຫະກຳ

### ມາດຕາ 51. ການປະຕິບັດນະໂຍບາຍ

1) ບຸກຄົນ ຫຼື ນິຕິບຸກຄົນ ຫຼື ສາມະຊິກຂອງ ສຄອຊ ໄດ້ປະກອບສ່ວນ - ສ້າງຜົນງານອັນດີເດັ່ນໃນຂະບວນການເຄື່ອນໄຫວວຽກງານທຸລະກິດທີ່ໄດ້ຖືກຍອມຮັບຈາກສັງຄົມ (ໂດຍໄດ້ ການຄັດເລືອກ ຕາມລະບຽບການທີ່ກຳນົດໄວ້)ແມ່ນຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມຄວາມເໝາະສົມ ແລະລະບຽບການຂອງລັດຖະບານວາງໄວ້,
2) ການຍ້ອງຍໍບຸກຄົນ ຫຼື ນິຕິບຸກຄົນ ຫຼື ສາມະຊິກຂອງ ສຄອຊ ແມ່ນຈະດຳເນີນທຸກໆ ສາມປີ, ໂດຍແມ່ນວາລະຂອງຄະນະບໍລິຫານຊຸດນັ້ນໆຈະເປັນຜູ້ພິຈາລະນາ,
3) ການຕົກລົງຍ້ອງຍໍ ບຸກຄົນ ຫຼື ນິຕິບຸກຄົນ ຫຼື ສາມະຊິກຂອງ ສຄອ ແຫ່ງຊາດລາວຈະແບ່ງອອກເປັນສາມຂັ້ນຄື:

DRAFT

ການຍ້ອງຍໍລະດັບລັດຖະບານ(ຫຼຽນກາພັດທະນາ, ຫຼຽນກາແຮງງານ ແລະ ໃບຍ້ອງຍໍ),

ການຍ້ອງຍໍລະດັບກະຊວງ ( ໃບຍ້ອງຍໍ ),

ການຍ້ອງຍໍລະດັບ ສຄອ ( ໃບຍ້ອງຍໍ ).

4) ຂະບວນການຄັດເລືອກທັງສາມລະດັບທີ່ກໍານົດໄວ້ໃນຂໍ້ເທິງແມ່ນຈະປະຕິບັດຕາມມາດຖານ, ເງື່ອນໄຂ ແລະ ລະບຽບຂອງລັດວາງໄວ້.

**ມາດຕາ 52. ການປະຕິບັດວິໄນຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ນິຕິບຸກຄົນ ຫຼື ສະມາຊິກຂອງ ສຄອຊ ທີ່ມີການເຄື່ອນໄຫວ, ການສົມຮູ້ຮ່ວມຄິດ ແລະ ມີພຶດຕິກໍາທີ່ສ້າງຄວາມເສຍຫາຍຕໍ່ ສຄອຊ, ສຄອແຂວງ, ສຄອ ນະຄອນຫຼວງ, ສຄອ ນະຄອນ, ສຄອ ເມືອງ ຫຼື ປະເທດຊາດ, ເຊິ່ງເປັນການລະເມີດຕໍ່ດໍາລັດສະບັບນີ້ຈະໄດ້ຖືກປະຕິບັດຕາມມາດຕະການຄື:

1) ຈະຖືກຮຽກຕົວເຂົ້າມາສຶກສາອົບຮົມ ແລະ ຕັກເຕືອນໃນເບື້ອງຕົ້ນ,

2) ຖ້າຫາກຍັງມີການປະຕິບັດ ແລະການເຄື່ອນໄຫວລະເມີດເປັນຄັ້ງທີສອງກໍຈະຖືກຕັກເຕືອນແລະ ສົ່ງບັນຫາດັ່ງກ່າວໄປຍັງຄະນະບໍລິຫານງານເພື່ອພິຈາລະນາຢ່າງເປັນລາຍລັກອັກສອນ,

3) ຖ້າຫາກເປັນກໍລະນີທີ່ຮ້າຍແຮງແມ່ນຈະສົ່ງບັນຫາດັ່ງກ່າວເປັນລາຍລັກອັກສອນໃຫ້ແກ່ຂະບວນການຍຸດຕິທໍາປະຕິບັດຕາມລະບຽບ - ກົດໝາຍຂອງລັດ.

## ໝວດທີ XII
## ການຈັດຕັ້ງປະຕິບັດ

**ມາດຕາ 53. ການຈັດຕັ້ງປະຕິບັດ**

ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ມີໜ້າທີ່ຮັບຜິດຊອບຈັດຕັ້ງປະຕິບັດດໍາລັດສະບັບນີ້, ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ຈົ່ງຮັບຮູ້ ແລະ ປະຕິບັດຕາມລະບຽບສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 54. ຜົນສັກສິດ**

ກົດລະບຽບສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນສະບັບນີ້ເປັນຕົ້ນໄປ ແລະ ນໍາໃຊ້ປ່ຽນແທນກົດລະບຽບສະບັບ ລົງວັນທີ ............. ຂອງ ສຄອ ແຫ່ງຊາດລາວ.

ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດລາວ

ປະທານ